ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ 96 /ນຍ

ນະຄອນຫລວງວຽງຈັນ, ວັນທີ 23.09.2008

ກະຊວງອຸດສາຫະກຳແລະການຄ້າ
ເອກະສານເຂົ້າ ເລກທີ: 2180 ວັນທີ: 29/9/08

ກະຊວງອຸດສາຫະກຳແລະການຄ້າ
ກົມການຄ້າພາຍໃນ
ເອກະສານເຂົ້າ ເລກທີ: 1979 ວັນທີ: 01.10.08

# ຂໍ້ຕົກລົງ
## ຂອງນາຍົກລັດຖະມົນຕີ
## ວ່າດ້ວຍການສ້າງສາງແຮເຂົ້າແຫ່ງຊາດ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06/05/2003.

- ອີງຕາມມະຕິຂອງກອງປະຊຸມລັດຖະບານ ຄັ້ງວັນທີ 29 - 31 ກໍລະກົດ 2008.

- ເພື່ອຮັບປະກັນຄວາມປອດໄພດ້ານສະບຽງອາຫານ ແລະ ເພື່ອດັດສົມລາຄາເຂົ້າບໍ່ໃຫ້ເກີດການປັ່ນປ່ວນຮ້າຍແຮງ.

## ນາຍົກລັດຖະມົນຕີ ຕົກລົງ :

ມາດຕາ 01 : ສ້າງສາງແຮເຂົ້າແຫ່ງຊາດ ຊຶ່ງປະກອບດ້ວຍ :
- ສາງແຮເຂົ້າຂອງລັດຖະບານ.
- ສາງແຮເຂົ້າຂອງຜູ້ປະກອບການໂຮງສີ ແລະ ຫົວໜ່ວຍທຸລະກິດ ຊື້ - ຂາຍ ເຂົ້າ.
- ສາງແຮເຂົ້າຂອງປະຊາຊົນ.

ມາດຕາ 02 : ປະລິມານສາງແຮເຂົ້າແຫ່ງຊາດ ລວມທັງໝົດແມ່ນ 65.000 ໂຕນ, ໂດຍແຍກອອກດັ່ງນີ້:

2.1- ສາງແຮເຂົ້າຂອງລັດຖະບານ 30.000 ໂຕນເຂົ້າສານ ( ບໍ່ລວມເອົາສາງແຮເຂົ້າສຳລັບກຳລັງປະກອບອາວຸດ ປກຊ - ປກສ ):

2.2- ສາງແຮເຂົ້າຂອງຜູ້ປະກອບການ ໂຮງສີເຂົ້າ ແລະ ຫົວໜ່ວຍທຸລະກິດ ຊື້-ຂາຍເຂົ້າ ຂອງເອກະຊົນ ແລະ ຂອງປະຊາຊົນ ລວມກັນ 30.000 ໂຕນເຂົ້າສານ.

2.3- ສາງແຮແນວພັນເຂົ້າ 5.000 ໂຕນ.

ມາດຕາ 03 : ສາງແຮເຂົ້າຂອງລັດຖະບານ ປະກອບດ້ວຍ (1) ສາງແຮສຳລັບການສົງເຄາະຊ່ວຍເຫລືອ ຫລືແກ້ໄຂຄວາມຕ້ອງການໃນກໍລະນີສຸກເສີນຈຳເປັນຮີບດ່ວນ ອັນເນື່ອງມາຈາກການເກີດໄພພິບັດ ຫລື ເຫດສຸດວິໄສຕ່າງໆ (2) ສາງແຮສຳລັບໃຊ້ແຊກແຊງຕະຫລາດ ແລະ ດັດສົມລາຄາ ໃນກໍລະນີເກີດສະພາບຂາດແຄນເຂົ້າຍ້ອນສາເຫດຕ່າງໆ ຫລືໃນກໍລະນີມີ